# ຂັ້ນຕອນການເກັບຕົວຢ່າງ

1. ຮັບປະກັນການໝາຍຫຼອດຕົວຢ່າງທີ່ຖືກຕ້ອງ




2. ຊອກຫາຕຸ່ມບາດແຜທີ່ໃໝ່ ແລ້ວໃຊ້ໄມ້ຕ້ອຍຕຸ່ມບາດແຜ ເອົາໃສ່ຫຼອດ VTM



3. ໃຊ້ໄມ້ຕ້ອຍອັນໃຫມ່ເພື່ອ ຕ້ອຍຕຸ່ມບາດແຜທີ່ໃໝ່ຕຸ່ມທີສອງທີ່ມີລັກສະນະແຕກຕ່າງຈາກຕຸ່ມທຳອິດ ແລະ ຢູ່ບໍລິເວນອື່ນຂອງຮ່າງກາຍ



4. ເອົາໄມ້ຕ້ອຍອັນທີ່ສອງລົງໃນ່ຫຼອດ VTM ດຽວກັນກັບໄມ້ທຳອິດ ແລ້ວເກັບຕົວຢ່າງໄວ້ໃນອຸນຫະພູມລະຫວ່າງ 2-8 °C ທັນທີ




## ການຫຸ້ມຫໍ່ແບບ 3 ຊັ້ນ




ສອບຖາມຂໍ້ມູນເພີ່ມເຕີມ
ດຣ ວິລະສັກ ໂສມອຸໄລ 020 55601023
ດຣ ສຸພັດສອນ ຮວດທອງຄຳ 020 56551988

# ອຸປະກອນສຳລັບການເກັບຕົວຢ່າງ

1. ເຄື່ອງນຸ່ງປ້ອງກັນຕົວເອງ: ເສື້ອກາວ, ຖົງມືທຳມະດາ, ຜ້າອັດປາກດັງ n95, ຖົງປົກເກີບ, ໜ້າກາກປ້ອງກັນໃບໜ້າ/ແວ່ນ.
2. ໄມ້ຕ້ອຍຕົວຢ່າງນ້ຳຢູ່ໃນຕຸ່ມ
3. ພູມປູກນຳສົ່ງຕົວຢ່າງເຊື້ອຈຸລະໂລກ
4. ກ່ອງຢາງພາດສຕິກທີ່ມີຝາອັດ ແລະ ສະອາດສຳລັບເກັບຕົວຢ່າງຕຸ່ມບາດແຜ
5. ບິກເຜີດທີ່ລຶບບໍ່ອອກສຳລັບໝາຍກ່ອງຕົວຢ່າງ
6. ສານຝອກຂາວເຈືອປົນ 0.5% ທີ່ກຽມໄວ້ໃໝ່
7. ກ່ອງຂົນສົ່ງທີ່ທົນທານ ແລະ ແຜ່ນນ້ຳກ້ອນ

## ຊຸດປ້ອງກັນຕົວເອງ

- ແວ່ນຕາ
- ຜ້າອັດປາກດັງ N95
- ໜ້າກາກປ້ອງກັນໃບໜ້າ
- ເສື້ອກາວ
- ຖົງມືທຳມະດາ
- ຖົງປົກເກີບ




## ກ່ອນໃສ່ຊຸດປ້ອງກັນຕົນເອງ

- ຮັບປະກັນວ່າຊຸດ PPE **ມີຄວາມພໍດີເໝາະສົມ.**
- ກວດ, ກ່ອນນຸ່ງ ຫຼື ນຳໃຊ້ແຕ່ລະຄັ້ງ ເພື່ອຮັບປະກັນວ່າຊຸດ PPEຢູ່ໃນສະພາບດີ.
- ອະນາໄມມືກ່ອນ ແລະ ຫຼັງການໃສ່ຊຸດ PPE

# ການເກັບຕົວຢ່າງໂດຍການຕ້ອຍຈາກຕຸ່ມ ເພື່ອກວດຫາພະຍາດໝາກສຸກລີງ

